ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຖະແຫຼງການວຽງຈັນ ວ່າດ້ວຍການເປັນຄູ່ຮ່ວມ ເພື່ອການພັດທະນາທີ່ມີປະສິດທິຜົນ

# (2016-2025)

ພະຈິກ 2015



## I. ພາກສະເໜີ

1. ພວກເຮົາ, ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ລັດຖະບານ) ແລະ ບັນດາຄູ່ຮ່ວມພັດທະນາ (ຄູ່ຮ່ວມ), ໄດ້ພົບກັນທີ່ນະຄອນຫຼວງວຽງຈັນ, ສປປ ລາວ ໃນວັນທີ 27 ພະຈິກ 2015 ດ້ວຍນໍ້າໃຈແຫ່ງຄວາມເປີດກວ້າງ, ຄວາມສາມັກຄີ ແລະ ເສີມຂະຫຍາຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ. ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ 12 ໄດ້ຢັ້ງຢືນຜົນສໍາເລັດ ແລະ ບົດຮຽນທີ່ຖອດຖອນໄດ້ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 7 ສົກປີ 2011-2015 ແລະ ກໍານົດມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 ສົກປີ 2016-2020. ພວກເຮົາ ເຕົ້າໂຮມກັນໂດຍການເປັນຄູ່ຮ່ວມທີ່ກວ້າງຂວາງ ແລະ ເປີດກວ້າງຫຼາຍກວ່າແຕ່ກ່ອນ, ບົນພື້ນຖານຫຼັກການຮ່ວມກັນ, ເປົ້າໝາຍດຽວກັນ ແລະ ຄໍາໝາຍຫມັ້ນທີ່ເດັດດ່ຽວ ເພື່ອການພັດທະນາທີ່ມີປະສິດທິຜົນ.

2. ພວກເຮົາ ຮັບຮູ້ວ່າ ສປປ ລາວ ແລະ ປະຊາຄົມສາກົນຂອງພວກເຮົາ ຢືນຢູ່ບາດລ້ຽວທີ່ສໍາຄັນໃນການພັດທະນາປະເທດຊາດ ແລະ ສາກົນ. ສະນັ້ນ, ພວກເຮົາ ໄດ້ກ້າວເຂົ້າສູ່ໄລຍະໃຫມ່ ໃນການເປີດກວ້າງການເປັນຄູ່ຮ່ວມຂອງພວກເຮົາ. ພວກເຮົາ ຫວັງຢ່າງຍິ່ງວ່າ ຈະໄດ້ລິງເລີກການປຶກສາຫາລື ແລະ ການຮ່ວມມືຂອງພວກເຮົາ ທີ່ກວ້າງຂວາງກວ່າເກົ່າ ຊຶ່ງມີທັງສິ່ງທ້າທາຍ ແລະ ບັນລຸໝາກຜົນຂອງການພັດທະນາ.

3. ໃນລະດັບຊາດ, ລັດຖະບານ ສືບຕໍ່ພະຍາຍາມສູ້ຊົນເພື່ອເຮັດໃຫ້ປະເທດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ໂດຍຜ່ານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງ ຄົມແຫ່ງຊາດ ຄັ້ງທີ 8 ສົກປີ 2016-2020. ພວກເຮົາ ເຕົ້າໂຮມກັນເປັນໜຶ່ງດຽວໃນການຈັດຕັ້ງປະຕິບັດວຽກງານເພື່ອບັນລຸເປົ້າໝາຍໄລຍະຍາວດັ່ງກ່າວ ໂດຍອີງໃສ່ລະດັບການຂະຫຍາຍຕົວທາງດ້ານເສດຖະກິດທີ່ທົ່ວເຖິງ ແລະ ຍືນຍົງ ເຊິ່ງຈະສົ່ງຜົນໃຫ້ສາມາດບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ທີ່ຍັງປະຕິບັດ ບໍ່ທັນສໍາເລັດ.

4. ໃນລະດັບສາກົນ, ວາລະໃໝ່ແຫ່ງການພັດທະນາທີ່ທົ່ວເຖິງ ແລະ ຍືນຍົງ (ວາລະການພັດທະນາແບບຍືນຍົງເຖິງປີ 2030 ແລະ ເປົ້າໝາຍການພັດທະນາແບບຍືນຍົງ - SDGs) ໄດ້ຖືກຮັບຮອງເອົາຢູ່ກອງປະຊຸມສະມັດຊາໃຫຍ່ ສະຫະປະຊາຊາດ ກ່ຽວກັບການພັດທະນາແບບຍືນຍົງ ໃນເດືອນກັນຍາປີ 2015. ພວກເຮົາ ຫວັງວ່າຈະປະຕິບັດເປົ້າໝາຍເຫຼົ່ານີ້ໃນຂອບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 ຂອງພວກເຮົາ (2016-2020), ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ 10 ປີ (2016-2025) ແລະ ວິໄສທັດແຫ່ງຊາດ ປີ 2030.

5. ພວກເຮົາ ຍັງຮັບຮູ້ວ່າ ໄດ້ມີການຫັນປ່ຽນຈາກປະສິດທິຜົນຂອງການຊ່ວຍເຫຼືອມາເປັນການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ. ການຊ່ວຍເຫລືອທາງການເພື່ອການພັດທະນາ (ຊ.ກ.ພ) ເຊິ່ງເປັນແຫຼ່ງຕົ້ນຕໍຂອງການຊ່ວຍເຫຼືອເພື່ອການພັດທະນາສາກົນ ອັນໄດ້ປະກອບສ່ວນເຂົ້າໃນວຽກງານການຮ່ວມມືເພື່ອການພັດທະນາແບບຍືນຍົງ. ຊ.ກ.ພ ຍັງມີບົດບາດສໍາຄັນ ແລະ ຊຸກຍູ້ແຫຼ່ງທຶນເພື່ອການພັດທະນາໃນຮູບແບບຕ່າງໆ ເຊັ່ນ ສົ່ງເສີມໃຫ້ນໍາໃຊ້ທຶນເພື່ອການພັດທະນາຂອງລັດຖະບານ ແລະ ຄູ່ຮ່ວມພັດທະນາ ຮ່ວມກັນ ໃນການຈັດຕັ້ງປະຕິບັດໂຄງການບູລິມະສິດ ໂດຍສະເພາະ ຊຸກຍູ້ການລະດົມແຫຼ່ງທຶນພາຍໃນປະເທດ ຈາກທັງພາກລັດ ແລະ ເອກະຊົນ, ການລົງທຶນໂດຍກົງຂອງຕ່າງປະເທດ, ການຮ່ວມມື

ແບບໃຕ້-ໃຕ້ ແລະ ສາມຫຼ່ຽມ, ການສົ່ງຄວາມຮູ້ ແລະ ເຕັກໂນໂລຊີ ຕາມຄວາມສະໝັກໃຈ ແລະ ເງື່ອນໄຂຕ່າງໆທີ່ໄດ້ຕົກລົງກັນ ເຊິ່ງເປັນແຫຼ່ງທຶນທີ່ສຳຄັນເພື່ອບັນລຸເປົ້າໝາຍການພັດທະນາທີ່ໄດ້ແລກ ປ່ຽນໄປແລ້ວນັ້ນ. ພ້ອມກັນນີ້, ການມີສ່ວນຮ່ວມຂອງພາກເອກະຊົນ ແລະ ອົງການຈັດຕັ້ງທາງສັງຄົມ ໃນນາມທີ່ເປັນຄູ່ຮ່ວມພັດທະນາ ໃນລະດັບຊາດ, ໃນລະດັບຂະແໜງການ ແລະ ທ້ອງຖິ່ນ ແມ່ນມີຄວາມສຳຄັນຫຼາຍໃນວຽກງານການພັດທະນາ.

6. ຖະແຫຼງວຽງຈັນສະບັບຕົ້ນຂອງພວກເຮົາ ທີ່ໄດ້ຮັບການລົງນາມໃນເດືອນພະຈິກປີ 2006 ທີ່ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 9 ໄດ້ເປັນພື້ນຖານອັນດີໃຫ້ແກ່ການເປັນຄູ່ຮ່ວມຂອງພວກເຮົາ ຕາມບັນດາຫຼັກການຫຼັກໆຂອງການປະສານງານການຊ່ວຍເຫຼືອ. ພວກເຮົາໄດ້ມີຄວາມຄືບໜ້າໃນຫຼາຍໆຂົງເຂດຂອງການຮ່ວມມື. ເຖິງແນວໃດກໍ່ຕາມ ຍັງມີຫຼາຍຂົງເຂດທີ່ຈະຕ້ອງໄດ້ປັບປຸງ ເພື່ອໃຫ້ບັນລຸເປົ້າໝາຍສະຫັດສະຫວັດດ້ານພັດທະນາທີ່ຍັງບໍ່ທັນສຳເລັດ, ຮັບປະກັນການຫຼຸດພົ້ນອອກຈາກການເປັນປະເທດທີ່ດ້ອຍພັດທະນາ, ດຳເນີນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ ແລະ ຮັບປະກັນໝາກຜົນຂອງການພັດທະນາ. ສະນັ້ນ, ພວກເຮົາ ຈຶ່ງໄດ້ກຳນົດໃຫ້ມີການປັບປຸງຖະແຫຼງການວຽງຈັນສະບັບຕົ້ນພາຍໃຕ້ຂອບການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ເພື່ອໃຫ້ແທດເໝາະກັບສະພາບເງື່ອນໄຂຂອງ ສປປ ລາວ.

7. ພວກເຮົາ ຮັບຮູ້ບົດບາດສຳຄັນຂອງ ກອງເລຂາຂອງແຜນດຳເນີນງານແຫ່ງຊາດຂອງຖະແຫຼງການວຽງຈັນ ໃນການຕິດຕາມ ແລະ ລາຍງານການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫຼືອ. ນັບແຕ່ປີ 2006 ເປັນຕົ້ນມາ ພວກເຮົາໄດ້ຮັບຂໍ້ມູນຈາກກອງເລຂາຂອງແຜນດຳເນີນງານແຫ່ງຊາດຂອງຖະແຫຼງການວຽງຈັນ ດັ່ງນີ້: ການສຳຫຼວດ ກ່ຽວກັບການຈັດຕັ້ງປະຕິບັດຖະແຫຼງການປາຣີ ປີ 2008, ບົດລາຍງານການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫຼືອ ປີ 2008, ການສຳຫຼວດ ກ່ຽວກັບການຈັດຕັ້ງປະຕິບັດຖະແຫຼງການປາຣີ ປີ 2011, ການສຳຫຼວດການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫຼືອ ປີ 2014 ແລະ ການທົບທວນແຜນດຳເນີນງານແຫ່ງຊາດຂອງຖະແຫຼງການວຽງຈັນ ປີ 2015.

## II. ຖະແຫຼງການວ່າດ້ວຍການເພີ່ມທະວີການເປັນຄູ່ຮ່ວມ

8. ຖະແຫຼງການນີ້ ໄດ້ຖືກສ້າງຂຶ້ນບົນຈິດໃຈຂອງການເຂົ້າໃຈເຊິ່ງກັນ ແລະກັນ, ຄວາມໂປ່ງໃສ ແລະຄວາມຮັບຜິດຊອບຂອງທຸກພາກສ່ວນທີ່ກ່ຽວຂ້ອງກັບການພັດທະນາ. ເຊິ່ງມີຈຸດປະສົງເພື່ອເສີມຂະຫຍາຍການເປັນຄູ່ຮ່ວມ ເພື່ອສະໜັບສະໜູນທຸກຄວາມພະຍາຍາມທີ່ຈະຫຼຸດຜ່ອນຄວາມທຸກຍາກໃນທົ່ວປະເທດ, ພ້ອມທັງເສີມຂະຫຍາຍການພັດທະນາທີ່ຍືນຍົງ ແລະ ທົ່ວເຖິງ ໂດຍຄຳນຶງເຖິງປັດໃຈດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຂອງການພັດທະນາແບບຍືນຍົງ ແລະ ການພັດທະນາຂີດຄວາມສາມາດຂອງບຸກຄະລາກອນ ແລະ ອົງການຈັດຕັ້ງຕ່າງໆ.

9. ຖະແຫຼງການນີ້ ແມ່ນການຮັບຮູ້ຮ່ວມກັນ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມ ໃນການເສີມຂະຫຍາຍການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນຢູ່ ສປປ ລາວ. ຊຶ່ງບໍ່ແມ່ນເຄື່ອງມືຜູກມັດທາງດ້ານກົດໝາຍ, ຖະແຫຼງການນີ້ແມ່ນການຮັບຮູ້ຮ່ວມກັນ ລະຫວ່າງ ລັດຖະບານ ແລະ ຄູ່ຮ່ວມ ເພື່ອຍົກສູງການເປັນຄູ່ຮ່ວມເພື່ອໝາກຜົນຂອງການພັດທະນາ. ເພາະສະນັ້ນ ພວກເຮົາຈະຮ່ວມກັນກະກຽມສ້າງ

ແຜນດຳເນີນງານແຫ່ງຊາດ ເພື່ອຈັດຕັ້ງປະຕິບັດຖະແຫຼງການດັ່ງກ່າວ. ແຜນດຳເນີນງານແຫ່ງຊາດ ຈະກຳນົດຫນ້າວຽກທີ່ມີຂອບເວລາໃນການຈັດຕັ້ງປະຕິບັດ ເຊິ່ງຈະມີການທົບທວນ ແລະ ລາຍງານ ປະຈຳປີ. ພວກເຮົາ ຈະສະໜອງແຫຼ່ງຊັບພະຍາກອນ, ຄວາມຮູ້ຄວາມສາມາດ ທີ່ຈຳເປັນ ເພື່ອຈັດຕັ້ງປະຕິບັດຖະແຫຼງການດັ່ງກ່າວ.

## 1. ຄວາມເປັນເຈົ້າການ

10. ພວກເຮົາຮັບຮູ້ເຖິງການນຳພາທີ່ເຂັ້ມແຂງ ແລະ ຄຳໝັ້ນສັນຍາອັນສູງສົ່ງຂອງລັດຖະບານຕໍ່ການພັດທະນາ, ການຈັດຕັ້ງປະຕິບັດ ແລະ ການລາຍງານຜົນສຳເລັດຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ແລະ ການອຳນວຍຄວາມສະດວກ ໃຫ້ມີຂະບວນການປຶກສາຫາລືແບບເປີດກ້ວາງ, ລະອຽດ ແລະ ທົ່ວເຖິງ ຮັບປະກັນການມີສ່ວນຮ່ວມ ແລະ ທັດສະນະ ຂອງທຸກພາກສ່ວນທີ່ກ່ຽວຂ້ອງໃນລະດັບຕ່າງໆ.

11. ຄູ່ຮ່ວມ ຈະສະໜັບສະໜູນການນຳພາຂອງລັດຖະບານ ເພື່ອຮັດແໜ້ນນະໂຍບາຍ, ການເປັນຄູ່ຮ່ວມ ດ້ານແຜນງານ ແລະ ການປະຕິບັດທີ່ມີຢູ່ແລ້ວເພື່ອໃຫ້ມີຜົນສຳເລັດທີ່ເໝາະສົມຂອງແຕ່ລະຂະແໜງການ. ເພື່ອເຮັດໃຫ້ວາລະແຫ່ງຊາດໃນການພັດທະນາບັນລຸສຳເລັດຜົນ ພວກເຮົາມີຄວາມຈຳເປັນຕ້ອງໄດ້ສຸມຄວາມພະຍາຍາມຢ່າງຕໍ່ເນື່ອງ ເພື່ອຮັດແໜ້ນກົນໄກການປຶກສາຫາລື, ການວິໄຈດ້ານວິຊາການ ແລະ ການຮ່ວມມືທີ່ມີປະສິດທິຜົນ ພາຍໃຕ້ໜ່ວຍງານຂະແໜງການ. ເຊິ່ງຮຽກຮ້ອງໃຫ້ມີຄວາມພະຍາຍາມ ແລະ ການມີສ່ວນຮ່ວມຢ່າງຕັ້ງໜ້າ ຂອງບັນດາກະຊວງຂະແໜງການ ແລະ ຄູ່ຮ່ວມ ໃນການເຮັດວຽກຮ່ວມກັນ ເພື່ອປະຕິບັດຕາມຫຼັກການວ່າດ້ວຍການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນທີ່ໄດ້ລະບຸໄວ້ໃນຖະແຫຼງການນີ້. ພ້ອມກັນນັ້ນ, ພົວພັນເຖິງການເຊື່ອມໂຍງແຜນງານຕ່າງໆຂອງຂະແໜງການ ເຂົ້າກັບແຜນບູລິມະສິດແຫ່ງຊາດ.

12. ລັດຖະບານ ຈະເປັນຜູ້ນຳໜ້າໃນການພັດທະນາ ແລະ ການຈັດຕັ້ງປະຕິບັດ ຂອບການຕິດຕາມ ແລະ ປະເມີນຜົນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ ໂດຍການນຳໃຊ້ຂໍ້ມູນສະຖິຕິແຫ່ງຊາດທີ່ມີຄຸນນະພາບ. ນອກຈາກນີ້, ລັດຖະບານຈະສຸມທຸກຄວາມພະຍາຍາມໃນການຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ ໃຫ້ເປັນບັນດາແຜນງານບູລິມະສິດທີ່ເລັ່ງໃສ່ຜົນໄດ້ຮັບ ພາຍໃຕ້ຂອບລາຍຈ່າຍໄລຍະກາງ ແລະ ບັນດາແຜນການ ແລະ ແຜນງົບປະມານປະຈຳປີ.

13. ລັດຖະບານ ຈະສືບຕໍ່ເຊື່ອມສານ ຊ.ກ.ພ ເຂົ້າໃນຂອບການວາງແຜນ ແລະ ງົບປະມານ ໄປຄຽງຄູ່ກັນກັບການລົງທຶນຂອງລັດ ໃນບັນດາແຜນງານການພັດທະນາບູລິມະສິດ. ລັດຖະບານ ໃຫ້ຄຳໝັ້ນສັນຍາວ່າຈະປັບປຸງວຽກງານງົບປະມານໃຫ້ມີຄວາມໂປ່ງໃສ ຮັບປະກັນການຈັດສັນການຊ່ວຍເຫຼືອເຂົ້າໃນແຜນງົບປະມານຂອງລັດໃຫ້ໄດ້ຫຼາຍຂຶ້ນ ເພື່ອຊ່ວຍອຳນວຍຄວາມສະດວກໃຫ້ບັນດາຄູ່ຮ່ວມພັດທະນາໃນການນຳໃຊ້ລະບົບແຫ່ງຊາດ. ລັດຖະບານ ຈະສືບຕໍ່ ນຳພາໃນການປະສານງານ, ຕິດຕາມ, ວິໄຈ ແລະ ລາຍງານດ້ານການເງິນເພື່ອການພັດທະນາ ໃຫ້ມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ທັນຕາມກຳນົດເວລາ ໂດຍມີການອຳນວຍຄວາມສະດວກ ແລະ ຮັດແໜ້ນ ການເປັນຄູ່ຮ່ວມທີ່ມີຄຸນນະພາບ, ມີການປຶກສາຫາລື ແລະ ມີຄວາມເປັນເອກະສັນກັນ.

14. ໂດຍການສະໜັບສະໜູນຈາກຄູ່ຮ່ວມ, ລັດຖະບານ ຈະນໍາພາໃນການກໍານົດຄວາມຕ້ອງການດ້ານຂີດຄວາມສາມາດໃນລະດັບຕ່າງໆ ເພື່ອປັບປຸງການບໍລິການໃຫ້ດີຂຶ້ນ. ໂດຍສະເພາະ ລັດຖະບານໃຫ້ຄໍາໝັ້ນສັນຍາ ວ່າຈະປັບປຸງເປົ້າໝາຍການສ້າງຂີດຄວາມສາມາດ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຜັນຂະຫຍາຍໃຫ້ເປັນບັນດາຍຸດທະສາດ ແລະ ແຜນການຕ່າງໆ ພ້ອມທັງເຮັດວຽກຮ່ວມກັນກັບບັນດາຄູ່ຮ່ວມ ໃນການສ້າງ ແລະ ຈັດຕັ້ງປະຕິບັດແຜນງານການສ້າງຂີດຄວາມສາມາດຮອບດ້ານໃນໄລຍະຍາວ.

## 2. ຄວາມສອດຄ່ອງ

15. ພວກເຮົາ ຈະສານຕໍ່ບັນດາເປົ້າໝາຍທີ່ໄດ້ລະບຸໄວ້ໃນຖະແຫຼງການວຽງຈັນ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫຼືອ (2006) ທີ່ຈະນໍາໃຊ້ລະບົບແຫ່ງຊາດສໍາລັບການຮ່ວມມືເພື່ອການພັດທະນາ ໂດຍການສະໜັບສະໜູນບັນດາກິດຈະກໍາຕ່າງໆທີ່ພາກລັດຄຸ້ມຄອງ. ຈະເຮັດໄດ້ແນວນີ້, ລັດຖະບານ ແລະ ຄູ່ຮ່ວມ ຈະຮ່ວມກັນ ສ້າງເຄື່ອງມືວິເຄາະຕ່າງໆທີ່ເຫັນພ້ອມກັນທັງສອງຝ່າຍ, ມີການປະເມີນຄວາມສ່ຽງ ແລະ ມີມາດຕະການໃນການຫຼຸດຜ່ອນຄວາມສ່ຽງດັ່ງກ່າວໃນຂອບໄລຍະກາງ ເພື່ອແນ່ໃສ່ໃຫ້ມີການນໍາໃຊ້ລະບົບແຫ່ງຊາດໃຫ້ຫຼາຍຂຶ້ນ ບົນພື້ນຖານທີ່ຂໍ້ມູນດ້ານງົບປະມານແຫ່ງຊາດທີ່ໂປ່ງໃສ. ສິ່ງເຫຼົ່ານີ້ ຈະປະກອບສ່ວນເຂົ້າໃນການສ້າງ ແລະ ສະໜັບສະໜູນຂີດຄວາມສາມາດຂອງລະບົບແຫ່ງຊາດອັນຈະເຮັດໃຫ້ສາມາດຫຼຸດຜ່ອນ ຈໍານວນຂອງໜ່ວຍງານຈັດຕັ້ງປະຕິບັດໂຄງການຢູ່ບັນດາກະຊວງຂະແໜງການຕ່າງໆ. ລັດຖະບານ ແລະ ຄູ່ຮ່ວມຈະພະຍາຍາມເທົ່າທີ່ຈະເຮັດໄດ້ເພື່ອຫຼີກລ້ຽງບໍ່ໃຫ້ມີໂຄງສ້າງ ແລະ ຂະບວນການທີ່ຊໍ້າຊ້ອນກັນ.

16. ຖ້າວ່າຄູ່ຮ່ວມໃດບໍ່ສາມາດນໍາໃຊ້ລະບົບແຫ່ງຊາດ ຈະຕ້ອງໄດ້ແຈ້ງເຫດຜົນໃຫ້ລັດຖະບານ ເພື່ອປຶກສາຫາລື ທາງອອກທີ່ເໝາະສົມໃນການນໍາໃຊ້ລະບົບແຫ່ງຊາດ ລວມທັງຄວາມຈໍາເປັນຕ່າງໆເພື່ອປັບປຸງລະບົບດັ່ງກ່າວ.

17. ເພື່ອຮັບປະກັນຄວາມສອດຄ່ອງຂອງການຊ່ວຍເຫຼືອ ກັບບູລິມະສິດການພັດທະນາແຫ່ງຊາດ, ລັດຖະບານ ແລະ ຄູ່ຮ່ວມ ຈະເຮັດວຽກຮ່ວມກັນໃນການຄຸ້ມຄອງ ແລະ ລາຍງານກ່ຽວກັບການຊ່ວຍເຫລືອເພື່ອການພັດທະນາໃຫ້ມີຄວາມກົມກຽວກັນຫຼາຍຍິ່ງຂຶ້ນ, ເປັນລະບົບ, ມີປະສິດທິຜົນ, ມີຄວາມຮັບຜິດຊອບ ແລະ ໂປ່ງໃສ, ສອດຄ່ອງກັບມາດຖານຂອງອົງການຮ່ວມມືດ້ານເສດຖະກິດເພື່ອການພັດທະນາຂອງບັນດາປະເທດຜູ້ທຶນ (OECD-DAC) ແລະ ຂໍ້ລິເລີ່ມດ້ານຄວາມໂປ່ງໃສຂອງການຊ່ວຍເຫຼືອສາກົນ (IATI) ແລະ ອື່ນໆ.

18. ລັດຖະບານ ແລະ ຄູ່ຮ່ວມ ຈະເຮັດວຽກຮ່ວມກັນເພື່ອເພີ່ມທະວີການຮ່ວມມືເພື່ອການພັດທະນາໃນຕໍ່ໜ້າ ໂດຍຜ່ານກົນໄກ ແລະ ຂະບວນການປຶກສາຫາລືຂອງໜ່ວຍງານຂະແໜງການ ເພື່ອໃຫ້ຄໍາໝັ້ນສັນຍາ ກ່ຽວກັບການຮ່ວມມືເພື່ອການພັດທະນາໃຫ້ຊັດເຈນ ພາຍໃຕ້ຂອບລາຍຈ່າຍໄລຍະກາງຂອງລັດຖະບານ ໂດຍສະເພາະ ເພື່ອເຮັດໃຫ້ຄູ່ຮ່ວມນໍາໃຊ້ລະບົບແຫ່ງຊາດ ລັດຖະບານຈະເລັ່ງລັດສຸມທຸກຄວາມພະຍາຍາມໃນການເຜີຍແຜ່ຂໍ້ມູນງົບປະມານແຫ່ງລັດ ແລະ ຄວາມຕ້ອງການດ້ານການເງິນເພື່ອການພັດທະນາ ໃຫ້ມີຄວາມໂປ່ງໃສ ແລະ ທັນເວລາ. ລັດຖະບານ ແລະ ຄູ່ຮ່ວມ ຮັບປະກັນການນໍາໃຊ້ເຄື່ອງມື ໃນການຄຸ້ມຄອງການເງິນແຫ່ງລັດໃຫ້ເປັນປົກກະຕິຫຼາຍຂຶ້ນ ເຊັ່ນ: ການປັບປຸງລາຍຈ່າຍແຫ່ງລັດ ແລະ ຄວາມ

ຮັບຜິດຊອບດ້ານການເງິນ (PEFA) ແລະ ຈະສືບຕໍ່ປັບປຸງໃນແຕ່ລະໄລຍະ ແລະ ທັນເວລາ.

19. ໃນຂະບວນການປຶກສາຫາລື, ລັດຖະບານ ແລະ ຄູ່ຮ່ວມ ຮັບຮູ້ຄວາມສຳຄັນຂອງງົບປະມານແຫ່ງລັດທີ່ມີຄວາມໂປ່ງໃສ. ໃນນີ້ ລັດຖະບານ ຈະຮັບປະກັນໃຫ້ມີຄວາມສອດຄ່ອງກັນ ລະຫວ່າງ ຂະບວນການສ້າງແຜນການ ແລະ ແຜນງົບປະມານ ພາຍໃຕ້ຂອບການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (ລວມທັງແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ) ທີ່ມີການຈັດລຽງບູລິມະສິດ, ມີຫຼັກຖານຍັ້ງຢືນ ແລະ ເລັ່ງໃສ່ຜົນໄດ້ຮັບ ທີ່ຕິດພັນກັບການສ້າງແຜນງານຂະແໜງການ ແລະ ການກຳນົດງົບປະມານ.

## 3. ຄວາມກົມກຽວ ແລະ ຄວາມງ່າຍດາຍ

20. ລັດຖະບານ ແລະ ຄູ່ຮ່ວມ ຈະຮ່ວມກັນດຳເນີນການວາງແຜນ, ທົບທວນ, ຕິດຕາມ ແລະ ປະເມີນການຈັດຕັ້ງປະຕິບັດ ວຽກງານປະສິດທິຜົນຂອງການພັດທະນາທີ່ເປັນບູລິມະສິດ ເພື່ອສະຫນັບສະໜູນການບັນລຸວາລະການພັດທະນາແຫ່ງຊາດ ໂດຍອີງໃສ່ກົນໄກທົບທວນຮ່ວມກັນຂອງບັນດາປະເທດຜູ້ໃຫ້ທຶນ, ການຝຶກອົບຮົມ ແລະ ການລົງເຮັດວຽກພາກສະໜາມຕ່າງໆ. ສິ່ງທີ່ກ່າວມານັ້ນ ຮຽກຮ້ອງໃຫ້ມີຄວາມພະຍາຍາມຢ່າງຕໍ່ເນື່ອງ ເພື່ອຮັບປະກັນວ່າ ຫຼັກການຄຸ້ມຄອງຊັບພະຍາກອນມະນຸດ (ການວ່າຈ້າງ, ການປະເມີນຜົນການເຮັດວຽກ ແລະ ການຝຶກອົບຮົມ ພະນັກງານ) ມີຄວາມກົມກຽວກັນ ເພື່ອປັບປຸງ ແລະ ສ້າງຂີດຄວາມສາມາດແຫ່ງຊາດ, ລະບຽບຂັ້ນຕອນ ແລະ ສິ່ງຈູງໃຈຕ່າງໆ.

21. ລັດຖະບານ ແລະ ຄູ່ຮ່ວມ ຈະສຶກສາຄົ້ນຄວ້າຄວາມເປັນໄປໄດ້ ໃນການນຳໃຊ້ວິທີການຈັດຕັ້ງປະຕິບັດໂຄງການແບບເປັນແຜນງານ (PBAs) ໃຫ້ຫຼາຍຍິ່ງຂຶ້ນ ພາຍໃຕ້ຂອບການພັດທະນາ ແລະ ແຜນພັດທະນາແຫ່ງຊາດ, ເຊິ່ງຮຽກຮ້ອງໃຫ້ລັດຖະບານ ແລະ ຄູ່ຮ່ວມ ເຮັດວຽກຮ່ວມກັນຢ່າງໃກ້ຊິດເພື່ອກຳນົດວ່າ ທ່າແຮງໄດ້ປຽບຂອງແຕ່ລະຝ່າຍ ຈະສາມາດປະກອບສ່ວນໄດ້ດີທີ່ສຸດ ໃນການເປັນເຂົ້າຄູ່ຮ່ວມ ແລະ ການສ້າງໝາກຜົນຂອງການພັດທະນາ ໃນລະດັບຊາດ, ຂະແໜງການ ແລະ ແຂວງ. ຄູ່ຮ່ວມ ຈະສ້າງແຜນທີ່ຈະແຈ້ງ ເພື່ອຮັບປະກັນໃຫ້ມີການນຳໃຊ້ທ່າແຮງ ຫຼື ຂໍ້ໄດ້ປຽບຂອງເຂົາເຈົ້າຢ່າງເຕັມສ່ວນ ຢູ່ໃນລະດັບຊາດ, ຂັ້ນຂະແໜງການ ແລະ ຂັ້ນແຂວງ ໂດຍຜ່ານການປຶກສາຫາລືຢ່າງໃກ້ຊິດກັບລັດຖະບານ ເພື່ອຮັບປະກັນໃຫ້ການສະໜັບສະໜູນທີ່ສອດຄ່ອງກັບບູລິມະສິດແຫ່ງຊາດ.

22. ຄູ່ຮ່ວມ ຈະຊອກຫາຊ່ອງທາງເພື່ອກຳນົດລະບຽບຫຼັກການ ແລະ ຂັ້ນຕອນການດຳເນີນງານຕ່າງໆທີ່ແທດເໝາະຂອງຕົນ ດ້ວຍການຈັດຕັ້ງປະຕິບັດລະບຽບຫຼັກການ ແລະ ຂັ້ນຕອນທີ່ເປັນເອກະພາບກັນໃນການວາງແຜນ, ການອອກແບບ, ການໃຫ້ທຶນ, ການໃຊ້ຈ່າຍ, ການຈັດຕັ້ງປະຕິບັດ, ການຕິດຕາມ, ການປະເມີນຜົນ ແລະ ການລາຍງານຕໍ່ລັດຖະບານ ກ່ຽວກັບບັນດາກິດຈະກຳ ແລະ ການໄຫຼວຽນດ້ານການເງິນເພື່ອການພັດທະນາຂອງຄູ່ຮ່ວມ. ຄູ່ຮ່ວມ ຈະສືບຕໍ່ພະຍາຍາມມອບສິດໃນການຕັດສິນໃຈດ້ານການເງິນ, ການປະກອບພະນັກງານ, ບົດບາດ ແລະ ໜ້າທີ່ຄວາມຮັບຜິດຊອບ ໃຫ້ແກ່ຫ້ອງການຜູ້ຕາງໜ້າ ໃນການອອກແບບ ແລະ ຈັດຕັ້ງປະຕິບັດແຜນງານການພັດທະນາ. ພ້ອມກັນນີ້, ລັດຖະບານ ແລະ ຄູ່ຮ່ວມ ຈະພະຍາຍາມນຳໃຊ້ ລະບຽບຫຼັກການໃນການຈ່າຍເງິນເບັ້ຍລ້ຽງ ແລະ ເງິນເດືອນສຳລັບພະນັກງານໂຄງການ ທີ່ສອດຄ່ອງກັບລະບົບແຫ່ງຊາດ.

## 4. ເປີດກວ້າງການເປັນຄູ່ຮ່ວມເພື່ອໝາກຜົນຂອງການພັດທະນາ

23. ພວກເຮົາ ຈະເສີມຂະຫຍາຍຈຸດສຸມຂອງການເປັນຄູ່ຮ່ວມຢ່າງເປີດກວ້າງເພື່ອໝາກຜົນຂອງການພັດທະນາ. ປະຈຸບັນ, ພວກເຮົາ ກຳລັງສ້າງຂະບວນການພັດທະນາທີ່ມີສ່ວນຮ່ວມຂອງຫຼາຍພາກສ່ວນ ຊຶ່ງວ່າ ພາກສ່ວນຕ່າງໆ ກໍ່ໄດ້ປະສານສົມທົບ ແລະ ມີສ່ວນຮ່ວມ ບົນພື້ນຖານຂອງການມີເປົ້າໝາຍ ແລະ ຫຼັກການອັນດຽວກັນ. ບົນພື້ນຖານດຽວກັນນີ້, ພວກເຮົາ ຍິນດີສົ່ງເສີມການມີສ່ວນຮ່ວມຂອງບັນດາຄູ່ຮ່ວມປະເທດກຳລັງພັດທະນາດ້ວຍກັນ ໃນຂອບການຮ່ວມມືແບບໃຕ້-ໃຕ້, ອົງການຈັດຕັ້ງທາງສັງຄົມ, ພາກເອກະຊົນ ແລະ ພາກສ່ວນຈັດຕັ້ງປະຕິບັດອື່ນໆ ໃນຂະບວນການສົນທະນາປຶກສາຫາລືທີ່ມີຢູ່ແລ້ວ.

24. ໃນລະບົບສະຖາບັນຂອງລັດຖະບານ, ຂີດຄວາມສາມາດຂອງສະພາແຫ່ງຊາດໃນການເປັນຕົວແທນ ແລະ ການສ້າງກົດໝາຍ ຈະໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນ ໂດຍສະເພາະໃນວຽກງານການຕິດຕາມກວດກາບັນດາຂະບວນການພັດທະນາ ໂດຍຜ່ານການສ້າງຂີດຄວາມສາມາດ, ສະໜອງຊັບພະຍາກອນທີ່ພຽງພໍ ແລະ ກຳນົດແຜນປະຕິບັດງານທີ່ແທດເໝາະ.

25. ລັດຖະບານ ຈະສືບຕໍ່ສະໜັບສະໜູນ ອຳນາດການປົກຄອງທ້ອງຖິ່ນ ໃຫ້ມີຄວາມຫ້າວຫັນ ໃນການນຳພາຂະບວນການພັດທະນາ, ປະຕິບັດໜ້າທີ່ໃນການໃຫ້ບໍລິການດີຂຶ້ນ, ປັບປຸງກົນໄກການປະສານງານທີ່ມີສ່ວນຮ່ວມຂອງຫຼາຍຂະແໜງການ ແລະ ສົ່ງເສີມການມີສ່ວນຮ່ວມ ແລະ ການມີຄວາມຮັບຜິດຊອບ ຢູ່ຂັ້ນທ້ອງຖິ່ນ.

26. ການປະກອບສ່ວນອັນສຳຄັນຂອງບັນດາປະເທດຜູ້ໃຫ້ທຶນໃໝ່ ຕໍ່ການເປັນຄູ່ຮ່ວມເພື່ອການພັດທະນາ ແມ່ນໄດ້ຖືກຮັບຮູ້ ໂດຍສະເພາະແມ່ນຈາກບັນດາປະເທດອາຊຽນ ແລະ ປະເທດໃກ້ຄຽງ, ພວກເຮົາຈະພະຍາຍາມປະສານສົມທົບກັບບັນດາຄູ່ຮ່ວມດັ່ງກ່າວ ເພື່ອສະໜັບສະໜູນການບັນລຸເປົ້າໝາຍແຫ່ງຊາດດ້ານການພັດທະນາ ລວມທັງການໃຫ້ຄຳໝັ້ນສັນຍາດ້ານກິດຈະກຳເພື່ອສະໜັບສະໜູນ, ຈັດຕັ້ງປະຕິບັດ ແລະ ຕິດຕາມວຽກງານການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ຕະຫຼອດຮອດຄຳໝັ້ນສັນຍາດ້ານໂຄງສ້າງ ແລະ ກົນໄກການປະສານງານ ເຊັ່ນ ຂະບວນການໂຕະມົນ ແລະ ໜ່ວຍງານຂະແໜງການເພື່ອປຶກສາຫາລືກັບຜູ້ໃຫ້ທຶນ. ນອກຈາກນີ້ ຍັງມີການສະໜັບສະໜູນ ໃນການແນະນຳ ແລະ ປັບປຸງກິດຈະກຳການຊ່ວຍເຫຼືອທາງການເພື່ອການພັດທະນາ ເປັນຕົ້ນແມ່ນການໄຫຼວຽນດ້ານການເງິນຂອງທັງພາກລັດ ແລະ ພາກເອກະຊົນ, ການຖ່າຍໂອນຄວາມຮູ້ຄວາມສາມາດ ແລະ ເຕັກໂນໂລຊີ ແລະ ຄວາມຄິດລິເລີ່ມກ່ຽວກັບການຮ່ວມມືແບບໃຕ້-ໃຕ້ ແລະ ແບບສາມຫຼ່ຽມ ທີ່ສອດຄ່ອງກັບຫຼັກການການຮ່ວມມືເພື່ອການພັດທະນາ ທີ່ໄດ້ກຳນົດໄວ້ໃນຖະແຫຼງການສະບັບນີ້ ແລະ ບູລິມະສິດຂອງແຜນພັດທະນາແຫ່ງຊາດ.

27. ລັດຖະບານ ຈະສືບຕໍ່ຄວາມພະຍາຍາມຂອງຕົນໃນການອຳນວຍຄວາມສະດວກໃຫ້ແກ່ບັນດາອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ສະມາຄົມທີ່ບໍ່ສະແຫວງຫາຜົນກຳໄລພາຍໃນ ກໍ່ຄືອົງການມູນນິທິຊ່ວຍເຫຼືອ, ກອງທຶນເພື່ອການພັດທະນາ, ສະຖາບັນຄົ້ນຄວ້າ, ຄັງປັນຍາ ແລະ ສະຖາບັນການສຶກສາ ເພື່ອດຳເນີນຈັດຕັ້ງປະຕິບັດກິດຈະກຳຂອງເຂົາເຈົ້າ ແລະ ມີສ່ວນຮ່ວມໃນກິດຈະກຳການຮ່ວມມືເພື່ອການພັດທະນາ. ຄູ່ຮ່ວມເຫລົ່ານີ້ ໄດ້ເຮັດໃຫ້ການສົນທະນາມີຄວາມໝາຍ ໂດຍສະເພາະແມ່ນກ່ຽວກັບສິ່ງທ້າທາຍຕ່າງໆທີ່ສຳຄັນດ້ານການພັດທະນາຊັບພະຍາກອນມະນຸດ ແລະ ສິ່ງແວດລ້ອມ ດ້ວຍການສ້າງຄວາມຮູ້, ການຮຽນຮູ້ ແລະ ປະກອບສ່ວນໃນການປຶກສາຫາລືດ້ານນະໂຍບາຍ ດ້ວຍວິທີການຄຳນຶງ

ເຖິງສິດທິຕ່າງໆໃນການຊ່ວຍສ້າງນະໂຍບາຍ ຕະຫຼອດຮອດການສ້າງຄວາມເຂົ້າໃຈຢ່າງເລິກເຊິ່ງ, ການຊອກຫາແຫຼ່ງຊັບພະຍາກອນໃໝ່ໆ ແລະ ມີຄວາມສາມາດໄປຮອດໄປເຖິງ ພ້ອມທັງສາມາດອອກໄປໃຫ້ບໍລິການດ້ານຕ່າງໆແກ່ປະຊາຊົນຜູ້ທີ່ທຸກຍາກ. ລັດຖະບານ ແລະ ຄູ່ຮ່ວມ ຊຸກຍູ້ອົງການເຫຼົ່ານັ້ນໃຫ້ຈັດຕັ້ງປະຕິບັດແນວທາງປະຕິບັດ ທີ່ຮັດແໜ້ນຄວາມຮັບຜິດຊອບ, ການແລກປ່ຽນຄວາມຮູ້ ແລະ ການປະກອບສ່ວນຂອງເຂົາເຈົ້າເຂົ້າໃນການພັດທະນາທີ່ມີປະສິດທິຜົນ, ໂດຍອີງໃສ່ຫລັກການ ແລະ ຂອບວຽກແຫ່ງຊາດ ແລະ ສາກົນ.

28. ເພື່ອຮັດແໜ້ນການເປັນຄູ່ຮ່ວມເພື່ອໝາກຜົນຂອງການພັດທະນາ, ລັດຖະບານ ແລະ ຄູ່ຮ່ວມ ຈະຮ່ວມກັນປັບປຸງການຄຸ້ມຄອງທີ່ເລັ່ງໃສ່ຜົນໄດ້ຮັບ ທັ້ງນີ້ກໍ່ເພື່ອຊ່ວຍຮັບປະກັນໃຫ້ໝາກຜົນຂອງການພັດທະນາ ມີຫຼັກຖານທີ່ຊັດເຈນ ແລະ ສາມາດພິສູດໄດ້. ຈະເຮັດໄດ້ຄືແນວນັ້ນ, ພວກເຮົາມີຄວາມຈໍາເປັນຕ້ອງໄດ້ຮັບການສະໜັບສະໜູນຢ່າງຕໍ່ເນື່ອງ ໃນການສ້າງ ແລະ ປັບປຸງບັນດາລະບຽບຫຼັກການ ແລະ ຂັ້ນຕອນວິທີການ ດ້ານສະຖິຕິ, ການຕິດຕາມ ແລະ ປະເມີນຜົນ ຂອງ ສປປ ລາວ. ໂດຍສະເພາະ ລັດຖະບານຈະສ້າງຂອບການຕິດຕາມ ແລະ ປະເມີນຜົນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ກົນໄກຮູບແບບຕ່າງໆ ເຊິ່ງຈະໄດ້ຖືກຮັບຮອງເອົາໂດຍທຸກພາກສ່ວນກ່ຽວຂ້ອງ ເພື່ອເປັນເຄື່ອງມືອັນດຽວກັນ ໃນການປະເມີນຜົນການເຮັດວຽກຕາມຈໍານວນຕົວຊີ້ວັດທີ່ສາມາດຄຸ້ມຄອງໄດ້ ທີ່ໄດ້ກໍານົດຕາມເປົ້າໝາຍບູລິມະສິດດ້ານການພັດທະນາຂອງປະເທດ. ຄູ່ຮ່ວມ ຈະຫຼຸດຜ່ອນການນໍາໃຊ້ຂອບວຽກອື່ນໆຂອງເຂົາເຈົ້າໃຫ້ໄດ້ຫຼາຍເທົ່າທີ່ຈະເຮັດໄດ້.

29. ອີງຕາມນະໂຍບາຍຂອງລັດຖະບານໃນການສົ່ງເສີມບົດບາດຍິງ-ຊາຍ ເພື່ອໝາກຜົນຂອງການພັດທະນາ, ພວກເຮົາຈະຕ້ອງມີລະບົບສະເພາະໃນການຕິດຕາມຄວາມບໍ່ເທົ່າທຽມທາງເພດ ແລະ ຄວາມແຕກໂຕນກັນ ໃນລະດັບພາກພື້ນ. ລັດຖະບານ ແລະ ຄູ່ຮ່ວມ ຈະຮ່ວມກັນສຸມທຸກຄວາມພະຍາຍາມເພື່ອເລັ່ງລັດເກັບກໍາ, ວິເຄາະ, ລາຍງານ ແລະ ເຜີຍແຜ່ ວິທີການໃນການສັງລວມຂໍ້ມູນທີ່ກົມກຽວກັນ ເຊິ່ງຈະຊ່ວຍໃນການຕັດສິນໃຈທີ່ດີດ້ານນະໂຍບາຍ ແລະ ການລົງທຶນ ທັ້ງນີ້ກໍ່ເພື່ອຮັບປະກັນໃຫ້ ຜູ້ຍິງ ແລະ ຜູ້ຊາຍ ກໍ່ຄື ແຂວງ ແລະ ເມືອງ ທີ່ໄດ້ຮັບຜົນກະທົບຈາກຄວາມທຸກຍາກ ແລະ ມີຄວາມສ່ຽງຫຼາຍທີ່ສຸດ ໄດ້ຮັບຜົນປະໂຫຍດຢ່າງເປັນທໍາ ຈາກການນໍາໃຊ້ງົບປະມານຂອງລັດ. ຄາດໝາຍ ສໍາລັບຄວາມເທົ່າທຽມທາງເພດ ແລະ ການໃຫ້ສິດອໍານາດແກ່ແມ່ຍິງ ລວມທັງເປົ້າໝາຍການຫຼຸດຜ່ອນຄວາມທຸກຍາກຢູ່ຂັ້ນທ້ອງຖິ່ນ ຈະໄດ້ຖືກເຊື່ອມສານເຂົ້າໃນກົນໄກຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສຢູ່ຂັ້ນທ້ອງຖິ່ນ ບົນພື້ນຖານຄໍາໝັ້ນສັນຍາຂອງສາກົນ ແລະ ພາກພື້ນທີ່ມີຢູ່ແລ້ວ.

30. ພາຍໃຕ້ຂອບວຽກຂອງເປົ້າໝາຍການພັດທະນາແບບຍືນຍົງ, ລັດຖະບານ ຈະປັບປຸງກົນໄກ ແລະ ວິທີການ ໃນການຄຸ້ມຄອງການເງິນທີ່ມີປະສິດທິພາບ, ການຄຸ້ມຄອງໄພທໍາມະຊາດທີ່ຖືກຕ້ອງ ແລະ ການຮ່ວມມືເພື່ອການພັດທະນາທີ່ເປີດກວ້າງ ໃຫ້ມີຄວາມສອດຄ່ອງ, ໂປ່ງໃສ ແລະ ສາມາດຄາດຄະເນໄດ້. ຄູ່ຮ່ວມ ຈະສືບຕໍ່ໃຫ້ການສະໜັບສະໜູນດ້ານນະໂຍບາຍ ແລະ ການວາງແຜນກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ເຊິ່ງເປັນສ່ວນສໍາຄັນຂອງແຜນພັດທະນາແຫ່ງຊາດ ແລະ ຮັບປະກັນວ່າ ມາດຕະການເຫຼົ່ານີ້ແມ່ນໄດ້ຮັບການສະໜັບສະໜູນດ້ານທຶນຮອນ, ຈັດຕັ້ງປະຕິບັດ ແລະ ຕິດຕາມຢ່າງໂປ່ງໃສ ໂດຍຜ່ານການສ້າງໃຫ້ມີລະບົບແຫ່ງຊາດ. ໂດຍສະເພາະ, ພາຍໃຕ້ການສະໜັບສະໜູນຂອງຄູ່ຮ່ວມ, ລັດຖະບານ ຈະນໍາພາໃນການປັບປຸງການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ການປ່ຽນແປງຂອງດິນຟ້າອາກາດ

ລວມທັງຄວາມຕ້ອງການໃນການສ້າງຂີດຄວາມສາມາດ ດ້ານວິຊາການ ແລະ ນະໂຍບາຍ ເພື່ອວິເຄາະຜົນກະທົບ ດ້ານສັງຄົມ, ສິ່ງແວດລ້ອມ ແລະ ວັດທະນະທຳ ແລະ ເພື່ອຄຸ້ມຄອງໄພພິບັດ ແລະ ການປ່ຽນແປງຂອງດິນຟ້າອາກາດ. ສິ່ງເຫຼົ່ານີ້ ຈະຊ່ວຍໃນການບັງຄັບໃຊ້ລະບຽບກົດໝາຍ.

## 5. ຄວາມໂປ່ງໃສ, ຄວາມສາມາດຄາດຄະເນໄດ້ ແລະ ຄວາມຮັບຜິດຊອບຮ່ວມກັນ

31. ພວກເຮົາ ຮັບຮູ້ຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍຫຼັກການຄວາມຮັບຜິດຊອບຮ່ວມກັນໃນລະດັບຊາດ ໂດຍຜ່ານການຈັດຕັ້ງປະຕິບັດຖະແຫຼງການວຽງຈັນ ວ່າດ້ວຍປະສິດທິຜົນຂອງການຊ່ວຍເຫລືອ. ການເປັນຄູ່ຮ່ວມ ແມ່ນມີຈຸດປະສົງ ເພື່ອສືບຕໍ່ສ້າງຜົນສຳເລັດໃນຂົງເຂດຄວາມຮັບຜິດຊອບຮ່ວມກັນ ແລະ ຄວາມໂປ່ງໃສ.

32. ລັດຖະບານ ຈະສ້າງງົບປະມານແຫ່ງຊາດທີ່ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ ເຊິ່ງບັນດາຄູ່ຮ່ວມພັດທະນາ ສາມາດຫັນການຊ່ວຍເຫຼືອດ້ານທຶນຮອນຂອງເຂົາເຈົ້າ ໃຫ້ສອດຄ່ອງກັບລະບົບຂອງລັດຖະບານ ທີ່ສາມາດຄາດຄະເນໄດ້. ພ້ອມດຽວກັນນີ້, ລັດຖະບານ ຈະສະໜອງບົດລາຍງານການເງິນທີ່ມີຄວາມໂປ່ງໃສ ກ່ຽວກັບການຈັດຕັ້ງປະຕິບັດງົບປະມານແຫ່ງຊາດ ໃຫ້ບັນດາຂະແໜງການພັດທະນາ ເພື່ອອຳນວຍຄວາມສະດວກໃຫ້ແກ່ການປະເມີນໝາກຜົນຂອງການພັດທະນາ.

33. ລັດຖະບານ ແລະ ຄູ່ຮ່ວມ ຈະຮ່ວມກັນດຳເນີນການທົບທວນປະຈຳປີ ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດເປົ້າໝາຍຂອງການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ແລະ ໝາກຜົນຂອງການພັດທະນາທີ່ດີຂຶ້ນ ໂດຍຜ່ານກົນໄກພາຍໃນປະເທດທີ່ມີຢູ່ ແລະ ມີລັກສະນະພາວະວິໄສຫຼາຍຂຶ້ນ. ພ້ອມກັນນັ້ນ, ພວກເຮົາ ຈະຮ່ວມກັນສ້າງແຜນດຳເນີນງານແຫ່ງຊາດ ແລະ ກຳນົດບັນດາຕົວຊີ້ວັດ ເພື່ອເປັນບ່ອນອີງ ແລະ ຕິດຕາມການຈັດຕັ້ງປະຕິບັດຖະແຫຼງການດັ່ງກ່າວ. ຕົວຊີ້ວັດຕ່າງໆທີ່ໄດ້ກຳນົດໄວ້ໃນຂອບການຕິດຕາມການເປັນຄູ່ຮ່ວມຂອງສາກົນ ແມ່ນຈະຖືກນຳມາຜັນຂະຫຍາຍໃຫ້ແທດເໝາະກັບສະພາບຂອງ ສປປ ລາວ, ລວມທັງຄາດໝາຍທີ່ມີໄລຍະເວລາໃນການຈັດຕັ້ງປະຕິບັດຊັດເຈນ ເຊິ່ງຕົວຊີ້ວັດຕ່າງໆທີ່ຈະເອົາເຂົ້າໃນແຜນດຳເນີນງານນັ້ນ ຈະມີຂອບວຽກສຳລັບການຕິດຕາມຄວາມຄືບໜ້າທັ້ງ ການຈັດຕັ້ງປະຕິບັດແຜນດຳເນີນງານ ແລະ ຜົນໄດ້ຮັບ.

34. ລັດຖະບານ ແລະ ຄູ່ຮ່ວມ ຈະນຳໃຊ້ຂອບການຕິດຕາມ ແລະ ປະເມີນຜົນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ເລັ່ງໃສ່ຜົນໄດ້ຮັບ ເພື່ອເປັນພື້ນຖານໃນການບັນທຶກຄວາມຄືບຫນ້າຂອງເປົ້າໝາຍ ແລະ ຄາດໝາຍຕ່າງໆ ທີ່ໄດ້ກຳນົດໄວ້ສຳລັບແຕ່ລະຂະແໜງການ, ພ້ອມກັບເປີດກວ້າງການປະເມີນການປະກອບສ່ວນຂອງພາກສ່ວນກ່ຽວຂ້ອງ ເພື່ອບັນລຸຈຸດປະສົງລະດັບຄາດໝາຍເຫຼົ່ານີ້, ລວມທັງບົດຮຽນທີ່ຖອດຖອນໄດ້ ແລະ ບາດກ້າວຕ່າງໆທີ່ຕ້ອງໄດ້ດຳເນີນ ທັ້ງນີ້ກໍ່ເພື່ອປັບປຸງຜົນການປະຕິບັດງານໃນຂະແໜງການດັ່ງກ່າວ.

35. ຕໍ່ກັບປະເດັນນີ້, ພວກເຮົາ ຈະເຮັດວຽກເພື່ອປັບປຸງການສະໜອງ ແລະ ການເຂົ້າເຖິງຂໍ້ມູນ ກ່ຽວກັບການຮ່ວມມືເພື່ອການພັດທະນາ ແລະ ແຫຼ່ງຊັບພະຍາກອນອື່ນໆສຳລັບການພັດທະນາ. ລັດຖະບານ ແລະ ຄູ່ຮ່ວມ ຈະເຮັດວຽກຮ່ວມກັນ ເພື່ອຕິດຕາມ ແລະ ລາຍງານ ກ່ຽວກັບການຮ່ວມມືເພື່ອການພັດທະນາ ແລະ ການຊ່ວຍເຫຼືອດ້ານທຶນຮອນເພື່ອການພັດທະນາ ແກ່ ສປປ ລາວ ໃນຮູບແບບຕ່າງໆ.

ງົບປະມານແຫ່ງຊາດ ຈະຖືກນໍາໃຊ້ເຂົ້າໃນການລາຍງານ ກ່ຽວກັບຄຸ້ມຄອງການບໍລິຫານງົບປະມານການເງິນແຫ່ງຊາດ ລວມທັງການຮ່ວມມືເພື່ອການພັດທະນາທີ່ນອນຢູ່ໃນງົບປະມານແຫ່ງຊາດດັ່ງກ່າວ ທີ່ໄດ້ຖືກຈັດສັນໃຫ້ບັນດາຂະແໜງການພັດທະນາ ເຊິ່ງກໍ່ແມ່ນຢູ່ໃນຄວາມຮັບຜິດຊອບຂອງລັດຖະບານ ຕໍ່ກັບສະພາແຫ່ງຊາດ ແລະ ປະຊາຊົນ ສໍາລັບທຶນຮອນ ແລະ ຜົນຂອງການນໍາໃຊ້ທຶນຮອນດັ່ງກ່າວ.

## 6. ການລະດົມທຶນພາຍໃນ

36. ການປະສົມປະສານກັນ ຂອງການປົກຄອງທີ່ດີ, ການເພີ່ມປະສິດທິຜົນ ແລະ ການລະດົມລາຍຮັບເພີ້ມຂອງລັດຖະບານ ແມ່ນມີຄວາມຈໍາເປັນ ເພື່ອຮັບປະກັນການສະໜອງທຶນໂດຍກົງເພື່ອການພັດທະນາໄລຍະຍາວ. ແຫລ່ງທຶນຂອງລັດຖະບານແມ່ນມີຄວາມສໍາຄັນ ໃນການຊຸກຍູ້ ການນໍາໃຊ້ທຶນເອກະຊົນ ສໍາລັບການລົງທຶນໃນການບໍລິການຂອງພາກລັດ, ການປົກປ້ອງທາງສັງຄົມ, ການພັດທະນາຊັບພະຍາກອນມະນຸດ ແລະ ພື້ນຖານໂຄງລ່າງ ຊຶ່ງເປັນພື້ນຖານຂອງການຂະຫຍາຍຕົວທາງດ້ານເສດຖະກິດທີ່ເຂັ້ມແຂງ ແລະ ທົ່ວເຖິງ.

37. ຕໍ່ບັນຫານີ້ ໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມ, ລັດຖະບານ ຈະຫາວິທີທາງເພື່ອ:

1) ເພີ້ມການລະດົມທຶນພາຍໃນຈາກພາກລັດ ແລະ ເອກະຊົນ ເພື່ອສະໜັບສະໜູນການພັດທະນາ;
2) ຮັບປະກັນ ທຶນສົມທົບຂອງ ລັດຖະບານ ແລະ ຄູ່ຮ່ວມ ໃນການຈັດຕັ້ງປະຕິບັດແຜນງານໂຄງການພັດທະນາທີ່ເປັນບູລິມະສິດ ໃຫ້ມີຄວາມສົມດູນ, ພ້ອມກັນນີ້ ຕ້ອງໄດ້ຈັດສັນງົບປະມານແຫ່ງຊາດເພີ່ມຂຶ້ນ ສໍາລັບການເຮັດວຽກເກີນເວລາ ແລະ ລາຍຈ່າຍຕ່າງໆ ກ່ຽວກັບການບໍລິການດ້ານສັງຄົມທີ່ສໍາຄັນໃຫ້ໄດ້ຕາມຄາດໝາຍທີ່ໄດ້ກໍານົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
3) ປັບປຸງລະບົບການເກັບພາສີ ໂດຍການຂະຫຍາຍຖານເກັບພາສີໃຫ້ກວ້າງຂວາງກວ່າເກົ່າ ແລະ ຂະຫຍາຍການຮ່ວມມືກັບສາກົນກ່ຽວກັບການເກັບພາສີ ເພື່ອສ້າງຂີດຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ ເກັບພາສີ ໃຫ້ສາມາດປະຕິບັດໜ້າທີ່ໄດ້ຢ່າງມີປະສິດທິຜົນ;
4) ຮັດແໜ້ນມາດຕະການ ເພື່ອຕໍ່ຕ້ານການສໍ້ລາດບັງຫຼວງ, ການລົບຫຼີກການເກັບພາສີແລະ ການໄຫຼຂອງເງິນທີ່ຜິດກົດໝາຍ ເຊິ່ງກີດໜ່ວງການເກັບເງິນພາຍໃນຂອງລັດ;
5) ຮັດແໜ້ນ ແລະ ພັດທະນາຂະແໜງການເງິນພາຍໃນຢ່າງທົ່ວເຖິງ ແລະ ການຄຸ້ມຄອງຊັບພະຍາກອນທໍາມະຊາດແບບຍືນຍົງ;
6) ສົ່ງເສີມສະພາບແວດລ້ອມດ້ານການຄ້າສາກົນທີ່ເອື້ອອໍານວຍ ແລະ ມີຄວາມເປັນທໍາຫຼາຍຍິ່ງຂຶ້ນເຊິ່ງປະກອບສ່ວນຢ່າງຊັດເຈນເຂົ້າໃນການພັດທະນາແບບຍືນຍົງ.

## 7. ການຮ່ວມມືແບບໃຕ້-ໃຕ້, ການຮ່ວມມືແບບສາມຫຼ່ຽມ ແລະ ການແລກປ່ຽນຄວາມຮູ້

38. ລັດຖະບານ ແລະ ຄູ່ຮ່ວມ ຮັບຮູ້ວ່າ ຫຼາຍປະເທດທີ່ເຂົ້າຮ່ວມໃນການຮ່ວມມືໃຕ້-ໃຕ້ ເປັນທັງຜູ້ສະໜອງ ແລະ ຜູ້ຮັບທຶນຮອນ ແລະ ຊ່ຽວຊານ ໃນເວລາດຽວກັນ ແລະ ອັນນີ້ ກໍ່ຄວນເສີມຂະຫຍາຍການຮ່ວມມືໃຫ້ອຸດົມສົມບູນຂຶ້ນ ໂດຍບໍ່ສົ່ງຜົນກະທົບຕໍ່ເງື່ອນໄຂຂອງປະເທດ ທີ່ຈະໄດ້ຮັບການຊ່ວຍເຫຼືອຈາກ

ປະເທດອື່ນໆ. ພວກເຮົາ ຈະຮັດແໜ້ນການແລກປ່ຽນຄວາມຮູ້ ແລະ ບົດຮຽນເຊິ່ງກັນແລະກັນດ້ວຍຫຼາຍຮູບການເຊັ່ນ:

1) ສ້າງຄວາມເຂົ້າໃຈໃຫ້ເລິກເຊິ່ງ ກ່ຽວກັບລັກສະນະ ແລະ ຮູບແບບຂອງການຮ່ວມມືໃຕ້-ໃຕ້ ແລະ ວິທີທາງ ແລະ ເຄື່ອງມືໃນການເສີມຂະຫຍາຍຜົນສະທ້ອນຂອງມັນຕໍ່ການພັດທະນາ;
2) ການພັດທະນາ ແລະ ການຂະຫຍາຍຂໍ້ລິເລີ່ມການຮ່ວມມືສາມຫຼ່ຽມ ທັງໃນລະດັບຍຸດທະສາດ, ນະໂຍບາຍ ແລະ ໂຄງການ;
3) ຊຸກຍູ້ການພັດທະນາເຄືອຂ່າຍຕ່າງໆ ສໍາລັບການແລກປ່ຽນຄວາມຮູ້, ການຮຽນຮູ້ນໍາກັນ ແລະ ການປະສານງານລະຫວ່າງຜູ້ທີ່ມີສ່ວນຮ່ວມໃນກອບການຮ່ວມມືໃຕ້-ໃຕ້ ເຊິ່ງເປັນວິທີອໍານວຍຄວາມສະດວກໃນການເຂົ້າເຖິງຄັງຄວາມຮູ້ທີ່ສໍາຄັນ;
4) ເພີ້ມທະວີຄວາມຮູ້ສັງລວມຂອງພວກເຮົາທີ່ມີຢູ່ ກ່ຽວກັບການຈັດຕັ້ງທີ່ເປັນໄປໄດ້ ສໍາລັບກົນໄກອໍານວຍຄວາມສະດວກ ເພື່ອສົ່ງເສີມການພັດທະນາ, ການຖ່າຍທອດ ແລະ ການເຜີຍແຜ່ເຕັກໂນໂລຊີທີ່ສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ ທີ່ສາມາດນໍາໃຊ້ໃຫ້ເປັນປະໂຫຍດແກ່ ສປປ ລາວ;
5) ສ້າງເງື່ອນໃຫ້ຄູ່ຮ່ວມມືໃຕ້-ໃຕ້ ເຂົາສູ່ໂຄງສ້າງການປະສານງານ ເຊັ່ນກົນໄກຂະບວນການໂຕະມົນ ແລະ ຂະແໜງການ.

## 8. ທຸລະກິດ ເປັນຄູ່ຮ່ວມໃນການພັດທະນາ

39. ລັດຖະບານ ແລະ ຄູ່ຮ່ວມ ຮັບຮູ້ວ່າ ບັນດາບໍລິສັດເອກະຊົນ ມີຄວາມພ້ອມທີ່ຈະປ່ຽນແປງວິທີດໍາເນີນທຸລະກິດຂອງຕົນ ດ້ວຍການຈັດສັນທຶນໃຫ້ມີຄວາມຍືນຍົງ ແລະ ທົ່ວເຖິງຍິ່ງຂຶ້ນ. ມີຫຼາຍຢ່າງ ກໍສາມາດເຮັດໄດ້ ຢູ່ລາວ ເພື່ອຮັບປະກັນວ່າ ຄູ່ຮ່ວມທຸລະກິດທີ່ສໍາຄັນຂອງພວກເຮົາ ມີການປະກອບສ່ວນທີ່ສໍາຄັນເຂົ້າໃນການລຶບລ້າງຄວາມທຸກຍາກ, ການພັດທະນາຊັບພະຍາກອນມະນຸດ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມ ໂດຍຜ່ານ ການຂະຫຍາຍຕົວທາງດ້ານເສດຖະກິດທີ່ເຂັ້ມແຂງ ແລະ ທົ່ວເຖິງ, ມີການສ້າງຄວາມຮັ່ງມີ ແລະ ອາຊີບທີ່ດີ, ການປະກອບການ, ສະມັດຕະພາບ ແລະ ການປະດິດສ້າງ, ການແບ່ງປັນຄວາມຮູ້ ແລະ ການຖ່າຍທອດເຕັກໂນໂລຊີ ແລະ ການຂະຫຍາຍການເຂົ້າເຖິງສິນຄ້າ ແລະ ການບໍລິການສໍາລັບໝົດທຸກຄົນ. ບົນຈິດໃຈດັ່ງກ່າວ, ພວກເຮົາ ເນັ້ນໜັກຄວາມສໍາຄັນຢ່າງຍິ່ງ ໃນການສົ່ງເສີມສະພາບແວດລ້ອມ ທີ່ເອື້ອອໍານວຍດ້ານການດໍາເນີນທຸລະກິດ ແລະ ການລົງທຶນ ສໍາລັບວິສະຫະກິດຂະໜາດໃຫຍ່, ຂະໜາດນ້ອຍ ແລະ ຈຸລະພາກ ທີ່ຊ່ວຍຊຸກຍູ້ການພັດທະນາແບບຍືນຍົງ ແລະ ທົ່ວເຖິງ ສອດຄ່ອງກັບນະໂຍບາຍ ແລະ ຂອບລະບຽບກົດໝາຍແຫ່ງຊາດ.

40. ພວກເຮົາ ຊົມເຊີຍ ພາກເອກະຊົນ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດບັນດາຫຼັກການ ເຊັ່ນ: ການມີຄວາມຮັບຜິດຊອບຮ່ວມກັນ, ການຕໍ່ຕ້ານການສໍ້ລາດບັງຫຼວງ ແລະ ຄວາມໂປ່ງໃສ. ລັດຖະບານ ຈະສືບຕໍ່ສ້າງສະພາບແວດລ້ອມທີ່ເອື້ອອໍານວຍໃຫ້ແກ່ການຄ້າການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຊິ່ງເປັນປັດໃຈສໍາຄັນກ້າວໄປສູ່ຄວາມສໍາເລັດຂອງພາກເອກະຊົນໃນໄລຍະຍາວຢູ່ ສປປ ລາວ. ພ້ອມກັນນີ້, ລັດຖະບານ ຈະຈັດສັນບູລິມະສິດເພື່ອຮັບປະກັນການນໍາໃຊ້ທຶນຮອນໃຫ້ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ ທັງນີ້ກໍ່ເພື່ອອໍານວຍຄວາມສະດວກໃຫ້ແກ່ການດໍາເນີນທຸລະກິດການຄ້າໃນລະດັບສາກົນ.

41. ຕໍ່ບັນຫາດັ່ງກ່າວ, ລັດຖະບານ ຈະພະຍາຍາມສ້າງວິທີການ ແລະ ເວທີ ທີ່ເໝາະສົມ ສໍາລັບການເປີດກວ້າງການປຶກສາຫາລື ແລະ ມີການຈັດຕັ້ງຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບບັນຫາກວມລວມຂອງການເປັນຄູ່ຮ່ວມລະຫວ່າງພາກລັດ ແລະ ເອກະຊົນ. ນອກຈາກນັ້ນ, ກົນໄກດ້ານການເງິນລະຫວ່າງພາກລັດ ແລະ ເອກະຊົນ ກໍສາມາດແບ່ງປັນຄວາມສ່ຽງດ້ານການລົງທຶນຢ່າງເໝາະສົມ ໃນຂະນະດຽວກັນ ກໍ່ສ້າງຜົນປະໂຫຍດສູງສຸດຕໍ່ການພັດທະນາເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ. ລັດຖະບານ ຈະໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການບັງຄັບໃຊ້ລັດແຫ່ງກົດໝາຍ ໃນ ສປປ ລາວ ຕາມທີ່ໄດ້ ກໍານົດໄວ້ໃນບັນດາກົດໝາຍ ແລະ ດໍາລັດຕ່າງໆ.

42. ໂດຍສະເພາະ, ລັດຖະບານ ຈະເຮັດວຽກຮ່ວມກັບຜູ້ຕາງໜ້າຂອງບັນດາ ສະມາຄົມທຸລະກິດ, ກໍາມະບານ ແລະ ພາກສ່ວນອື່ນໆ ເພື່ອປັບປຸງສະພາບແວດລ້ອມດ້ານກົດໝາຍ, ລະບຽບການ ແລະ ການບໍລິຫານ ເພື່ອການພັດທະນາ ການລົງທຶນຂອງເອກະຊົນ ແລະ ຮັບປະກັນໃຫ້ມີສະພາບແວດລ້ອມດ້ານນະໂຍບາຍ ແລະ ລະບຽບການທີ່ດີ ສໍາລັບການພັດທະນາພາກເອກະຊົນ, ເພີ່ມທະວີການລົງທຶນໂດຍກົງຈາກຕ່າງປະເທດ, ການເປັນຄູ່ຮ່ວມລະຫວ່າງພາກລັດ ແລະ ເອກະຊົນ, ການສ້າງຄວາມເຂັ້ມແຂງຂອງຕ່ອງໂສ້ມູນຄ່າທີ່ເທົ່າທຽມກັນ ແລະ ໃຫ້ການພິຈາລະນາເປັນພິເສດຕໍ່ເງື່ອນໄຂລະດັບປະເທດ ແລະ ຂົງເຂດລວມທັງເພີ່ມທະວີ ຄວາມພະຍາຍາມໃນການສະໜັບສະໜູນເປົ້າໝາຍການພັດທະນາ ແລະແນວຄິດລິເລີ້ມທີ່ກ່ຽວຂ້ອງຂອງສາກົນ.

43. ພວກເຮົາ ຊຸກຍູ້ໃຫ້ມີການນໍາໃຊ້ຫຼັກການກ່ຽວກັບຄວາມຮັບຜິດຊອບຕໍ່ສັງຄົມຮ່ວມກັນ ໃນຮູບແບບຂອງພາກທຸລະກິດທີ່ມີແນວຄວາມຄິດລິເລີ່ມດ້ວຍຕົວເອງ ເຊິ່ງຄວາມຮັບຜິດຊອບຕໍ່ສັງຄົມຮ່ວມກັນນີ້ ຈະເປັນກົນໄກການສະໝັກໃຈອັນໜຶ່ງ ທີ່ຫົວໜ່ວຍທຸລະກິດມີການຕິດຕາມ ແລະ ປະຕິບັດຕາມລະບຽບກົດໝາຍ, ຫຼັກຈັນຍາບັນ ແລະ ແນວທາງປະຕິບັດ ຂອງຊາດ ແລະ ສາກົນ ຢ່າງຕັ້ງໜ້າ.

## III. ທິດທາງແຜນການໃນຕໍ່ໜ້າ

44. ເພີ້ມທະວີກໍາລັງແຮງສັງລວມ, ການສ້າງຜົນປະໂຫຍດຈາກທ່າແຮງ ທີ່ເອື້ອອໍານວຍເຊິ່ງກັນ ແລະກັນ ແລະ ການເພິ່ງພາອາໃສການປະສານສົມທົບກັນ ຂອງແຫຼ່ງເງິນທຶນ ທັງໝົດແມ່ນຜົນສໍາເລັດແບບຄົບຊຸດຂອງການເປັນຄູ່ຮ່ວມເພື່ອການພັດທະນາທີ່ມີປະສິດທິຜົນ. ວິທີທາງ ແລະ ລະດັບຂອບເຂດທີ່ພວກເຮົາເຊື່ອມສານຂອບນະໂຍບາຍ ແລະ ການສະໜອງ ທຶນຮອນ ເພື່ອບັນລຸການພັດທະນາແບບຍືນຍົງ ແລະທົ່ວເຖິງ ຢູ່ ສປປ ລາວ ແມ່ນເປັນບັນຫາໃຈກາງ ໃນການຂັບເຄື່ອນວາລະລວມຂອງພວກເຮົາ ໃຫ້ໄປຂ້າງຫນ້າ.

45. ພວກເຮົາ ຈະສືບຕໍ່ລົງທຶນຢ່າງຫຼວງຫຼາຍໃນວິທີການເປັນຄູ່ຮ່ວມຂອງພວກເຮົາ ແລະ ການປຶກສາຫາລືທີ່ດີ ເຊິ່ງສາມາດເປັນເອກະພາບກັນ ກ່ຽວກັບຫລັກການ ແລະ ການປະຕິບັດຕົວຈິງໃນການພັດທະນາແບບຍືນຍົງ ແຕ່ນີ້ຮອດປີ 2030, ຊຶ່ງຜູ້ນໍາຂອງພວກເຮົາໄດ້ຮັບຮອງໃນກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດ ວ່າດ້ວຍການພັດທະນາແບບຍືນຍົງ ທີ່ນະຄອນຫຼວງ ນິວຍອກ ໃນເດືອນ ກັນຍາ 2015.

46. ຄະນະສະເພາະກິດ ທີ່ປະກອບດ້ວຍຕົວແທນຈາກລັດຖະບານ ແລະ ຄູ່ຮ່ວມ ຈະຮັບຜິດຊອບກະກຽມແຜນປະຕິບັດງານແຫ່ງຊາດ, ເຊິ່ງຈະມີການທົບທວນ ແລະ ເຮັດໃຫ້ສຳເລັດ ໂດຍມີການເຂົ້າຮ່ວມຂອງທຸກພາກສ່ວນທີ່ກ່ຽວຂ້ອງ. ແຜນປະຕິບັດງານດັ່ງກ່າວ ຈະຕ້ອງ ເຮັດໃຫ້ສຳເລັດພາຍໃນວັນທີ 30 ກັນຍາ 2016 ແລະ ນຳສະເໜີ ຕໍ່ກອງປະຊຸມປະຈຳປີ ເພື່ອທົບທວນ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເພື່ອໃຫ້ຮັບຮອງເອົາ ແລະ ດຳເນີນການຕິດຕາມ ໃນປີຕໍ່ໆໄປ.

## IV. ການລົງນາມ

ລົງນາມໃນກອງປະຊຸມໂຕະມົນລະດັບສູງ ຄັ້ງທີ 12, ວັນທີ 27 ພະຈິກ 2015, ທີ່ນະຄອນຫລວງວຽງຈັນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ຕາງໜ້າລັດຖະບານແຫ່ງ ສສປ ລາວ ແລະ ຕາງໜ້າຄູ່ຮ່ວມພັດທະນາ**




His Excellency Mr. Saleumxay Kommasith
Vice Minister of Foreign Affairs

Ms. Kaarina Immonen
UN Resident Coordinator
UNDP Resident Representative

H.E. Mr. Craig Chittick
First Assistant Secretary
Department of Foreign Affairs and Trade
Australia

H.E. Mr. Phil Calvert
Ambassador Extraordinary and
Plenipotentiary of Canada

Ms. Shannon Austin
Chargé d'Affaires,
New Zealand Embassy

H.E. Ms. Belinda Mariano Ante
Ambassador Extraordinary and
Plenipotentiary of the Philippines

H.E. Mr. Lodoidamba Galbadrakh
Ambassador Extraordinary and
Plenipotentiary of Mongolia

H.E. Mr. Mikhail V Baranov
Ambassador Extraordinary and
Plenipotentiary of the Russian
Federation

H.E. Mr. Kim Soo-Gwon
Ambassador Extraordinary and
Plenipotentiary of the Republic of Korea

Ms. Sandra Nicoll
Country Director - Lao PDR Resident
Mission - Asian Development Bank

Ms. Sally Burningham
World Bank Country Manager

H.E. Mr. Daniel A. Clune
Ambassador Extraordinary and
Plenipotentiary of the United States of
America

Mr. Vitavas Shivihok
Deputy Permanent Secretary
Ministry of Foreign Affairs
Thailand

H.E. Mr. Irmawan Emir Wisnandar
Ambassador Extraordinary and
Plenipotentiary of Indonesia

H.E. Mr. Hiroyuki Kishino
Ambassador Extraordinary and
Plenipotentiary of Japan

Mr. Nilton Rusdin Widjaya Sy Saad,
Chargé d'affaires a.i, Timor Leste

H.E. Mr. Ivo Sieber
Ambassador Extraordinary and
Plenipotentiary of Switzerland

ຖະແຫຼງການວຽງຈັນ ວ່າດ້ວຍດຳລັດການເປັນຄູ່ຮ່ວມພັດທະນາ ທີ່ມີປະສິດທິຜົນ ສະບັບນີ້ໃຫ້ການຮັບຮອງ ແລະ ສະໜັບສະໜູນໂດຍ:

- ບຣູໄນ ດາຣູສະເລັມ
- ອົງການສະຫະພາບເອີຣົບປະຈຳລາວ
- ເຢັຽລະມັນ
- ອິນເດຍ
- ກອງທຶນການເງິນສາກົນ **( IMF )**
- ອິຕາລີ
- ກຳປູເຈຍ
- ມາເລເຊຍ
- ເມນມ້າ
- ນໍຣເວ
- ສະວິເດັນ
- ອັງກິດ